ສະບາຍດີທຸກໆຄົນ

ສີພັນດອນຮູ້ສຶກພາກພູມໃຈບໍ່ມີສິ່ງໃດຈະປຽບໄດ້. ສໍາລັບງານພົບປະຂອງອະດີດນັກສຶກສາ ແລະຄຣູອາຈານຈາກວິທຍາລັຍຄຣູສວັນນະເຂດຂອງພວກເຮົາໄດ້ຜ່ານພົ້ນໄປເກີນຄາດ ຫມາຍ, ດອນຢາກຈະບອກໃຫ້ທຸກໆຄົນຮັບຮູ້ເຖີງຄວາມຮູ້ສຶກໃນຕອນເຊົ້າຂອງວັນອາທິດ ທີ່ບ້ານເອື້ອຍຂັນເງິນ ແຕ່ດອນບໍ່ມີຄວາມສາມາດຈະກ່າວອອກມາໄດ້ເພາະນໍ້າຕາແຫ່ງ ຄວາມສຸກຂອງທຸກໆຄົນໄດ້ລິນໄຫລອອກມາຊຶ່ງພາບໃນວັນນັ້ນຈະຢູ່ໃນຄວາມຊົງຈໍາຂອງ ດອນຕລອດຊົ່ວຊີວິດ.

ສີພັນດອນຢາກຂໍກ່າວຄວາມຮູ້ສຶກສ່ວນຕົວທີ່ໄດ້ມີໂອກາດພັກທີ່ບ້ານ ວິລາວັນ ໂດຍການ ຕ້ອນ ຮັບຢ່າງອົບອຸ່ນແລະເປັນກັນເອງຈາກອ້າຍທົງສວັດ ແລະເອື້ອຍຂັນເງິນ.

ຄວາມຮູ້ສຶກອົບອຸ່ນເປັນພິເສດກໍຄືທ່ານອາຈານເງິນແຫ່ງ ເກດຕະວົງພ້ອມດ້ວຍພັລຍາ ກໍຄືເອື້ອຍ ຍິມມະລາຂອງພວກເຮົາແລະທ່ານອາຈານ ວັນພິລາໄດ້ພັກຮ່ວມສາຍຄາ ບ້ານຫຼັງດຽວກັນ ຈຶ່ງເປັນຄວາມຮູ້ສຶກເຫມືອນຄອບຄົວໃຫຍ່ທີ່ມີພໍ່ແລະແມ່ທີ່ເປັນຕົວຢ່າງ ໃຫ້ແກ່ລູກໆຕື່ນກ່ອນນອນຫຼັງ. ທຸກໆເຊົ້າທີ່ດອນຕື່ນມາຈະເຫັນທ່ານອາຈານທັງສອງ ແລະເອື້ອຍຍິມມະລາຕື່ນກ່ອນເພື່ອການກະຕຽມ ມຽ້ນມັດ ປັດກວາດທາງເຮືອນຄົວ ແລະຫຼັງບ້ານຈຶ່ງເຮັດໃຫ້ພາບນັ້ນຈະຕິດຢູ່ໃນສາຍຕາແລະຈະຝັງຢູ່ໃນຄວາມຊົງຈໍາຂອງຫົວ ໃຈດອນຕລອດໄປ. ດອນຂໍບອກໃຫ້ທຸກໆຄົນຮັບຮູ້ຄວາມຮູ້ສຶກຂອງດອນວ່າ:

ຄວາມຊົງຈໍາ ໔ ປີ ຈາກຫຼັກເຈັດຝັງຢູ່ໃນຫົວໃຈນານພຽງໃດ? ຄວາມຊົງຈໍາ ໔ ວັນທີ່ບ້ານ ວິລາວັນ ກໍຈະຝັງຢູ່ໃນຫົວໃຈດອນນານພຽງນັ້ນ. ພູມໃຈທີ່ເຫັນນໍ້າຕາແຫ່ງຄວາມສຸກຂອງ ຫຼາຍໆຄົນໃນວັນນັ້ນໂດຍສະເພາະນໍ້າຕາຂອງລູກຜູ້ຊາຍທີ່ໄຫຼອອກມາຈາກການຟັງ ຄໍາກອນຂອງດອນ. ຂອບໃຈສຽງຕົບມືແລະມະລັຍນໍ້າໃຈທີ່ທຸກໆຄົນໃຫ້ແກ່ ສາວຫຼັກເຈັດ ສີພັນດອນ (ບົວວັນ ສີດາວົງ) ຈະບໍ່ມີວັນລືມ ໔ ວັນແຫ່ງຄວາມຊົງຈໍາ , ຂໍຂອບໃຈພິເສດ ເພື່ອນຄຣູອີກຄົນນຶ່ງທີ່ມີອຸດົມຄະຕິ/ອຸດົມການແລະພອນສວັນຄ້າຍໆກັນ ໄດ້ນໍາດອນມາ

ເຖິງທີ່ນີ້ເພື່ອນຄົນນີ້ຄື ໜູ ນິຣາວັນ ຊຶ່ງເປັນຄົນແຮກທີ່ອ່ານຄໍາກອນຂອງດອນແລະໃຫ້ຄໍາຕອບວ່າ (ດອນຂຽນໄດ້ດີຫຼາຍ) ພຽງເທົ່ານີ້ກໍສາມາດດຶງເອົາຄວາມຮູ້ສຶກທີ່ຝັງເລິກຢູ່ໃນຫົວໃຈອອກມາເປັນຄໍາກອນຢ່າງຄ່ອງແຄ້ວແລະຫຼຽນໄຫຼດີ.

ຂໍຂອບໃຈທຸກໆຄົນທີ່ໃຫ້ກໍາລັງໃຈດອນ

ຮັກແພງແລະນັບຖື

ສີພັນດອນ ສີດາວົງສ໌